ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
----===000===----

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ຫ້ອງການ

21110 --
ເລກທີ: ................ /ຍທຂ.ຫກ
ນະຄອນຫຼວງວຽງຈັນ, ວັນທີ: 20 OCT 2021

# ແຈ້ງການ

ເຖິງ: ບັນດາທ່ານ ພະນັກງານ, ທະຫານ, ຕຳຫຼວດ, ພໍ່ແມ່ປະຊາຊົນ ຊາວນະຄອນຫຼວງວຽງຈັນ ແລະ ຊາວຕ່າງດ້າວ ຜູ້ທີ່ຢູ່ອາໄສລຽບຕາມທາງຫຼວງແຫ່ງຊາດເລກທີ 13 ເໜືອ ແຕ່ສາມແຍກສີໄຄ, ເມືອງສີໂຄດຕະບອງ ຫາ ສີ່ແຍກສີເກີດ, ເມືອງນາຊາຍທອງ ທີ່ນັບຖື,

ເລື່ອງ: ວັນເລີ່ມຈັດຕັ້ງປະຕິບັດໂຄງການປັບປຸງ ຂະຫຍາຍ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດເລກທີ 13 ເໜືອ ຊ່ວງແຕ່ສາມແຍກສີໄຄ ກິໂລແມັດທີ 6 ຫາ ສີ່ແຍກສີເກີດ ກິໂລແມັດທີ 12, ລວງຍາວ 6 ກິໂລແມັດ.

- ອີງຕາມກົດໝາຍວ່າດ້ວຍທາງຫຼວງ ສະບັບເລກທີ 03/ສພຊ, ລົງວັນທີ 8 ເດືອນພະຈິກ ປີ 2016.
- ອີງຕາມສັນຍາກູ້ຢືມເງິນ ລະຫວ່າງ ລັດຖະບານແຫ່ງ ສ.ປ.ປ. ລາວ ແລະ ສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ໝາຍເລກ 6226-LA, 23/07/2018, ກອງທຶນກຸ່ມປະເທດນໍດິກເພື່ອການພັດທະນາ (NDF) ໝາຍເລກ C110, 7/12/2018, ທະນາຄານການລົງທຶນພື້ນຖານໂຄງລ່າງອາຊີ (AIIB) ໝາຍເລກ L0066A, 6/6/2019.

ຫ້ອງການ ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໂຄງການປັບປຸງຂະຫຍາຍ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດເລກທີ 13 ເໜືອ, ຊ່ວງແຕ່ ສາມແຍກສີໄຄ ຫາ ສີ່ແຍກສີເກີດ ລວງຍາວ 6 ກິໂລແມັດ (ກມ. 6 - ກມ. 12) ເປັນໂຄງການລົງທຶນຂອງລັດຖະບານ ສ.ປ.ປ. ລາວ, ໂດຍໄດ້ຮັບການສະໜັບ ສະໜູນເງິນກູ້ຢືມດອກເບ້ຍຕໍ່າ ຈາກ ສະຖາບັນການເງິນສາກົນ ຄື ທະນາຄານໂລກ, ທະນາຄານການລົງທຶນພື້ນຖານໂຄງລ່າງອາຊີ, ກອງທຶນກຸ່ມປະເທດນໍດິກເພື່ອການພັດທະນາ ແລະ ທຶນສົມທົບຂອງລັດຖະບານ ສ.ປ.ປ. ລາວ ເພື່ອປັບປຸງ ແລະ ສ້ອມແປງ ໃຫ້ເຊື່ອມຈອດກັບ ເສັ້ນທາງຫຼວງແຫ່ງຊາດເລກທີ 13 ເໜືອ ຊ່ວງສີເກີດ-ໂພນໂຮງ (ມີຄວາມຍາວ 58 ກມ) ທີ່ກຳລັງດຳເນີນການກໍ່ສ້າງໃນປັດຈຸບັນ. ຈຸດປະສົງຂອງໂຄງການ ແມ່ນເພື່ອປັບປຸງຍົກລະດັບ ມາດຕະຖານຂອງເສັ້ນທາງ ແລະ ຂະຫຍາຍຄວາມກ້ວາງຂອງໜ້າທາງອອກຕື່ມ ເພື່ອອຳນວຍຄວາມສະດວກໃນການຄົມມະນາຄົມຂົນສົ່ງ. ຊ່ວງທາງດັ່ງກ່າວຈະເລີ່ມຈັດຕັ້ງປະຕິບັດ ເລີ່ມແຕ່ ທ້າຍປີ 2021 ຫາ ທ້າຍປີ 2023 (ປະມານ 2 ປີ). ໜ້າວຽກຕົ້ນຕໍທີ່ຕ້ອງໄດ້ປະຕິບັດກ່ອນການກໍ່ສ້າງ ແມ່ນ ການໄກ່ເກ່ຍສິ່ງກີດຂວາງຕາມແລວທາງ ແລະ ກະກຽມຈັດຊື້-ຈັດຈ້າງເອົາ ຜູ້ຮັບເໝົາກໍ່ສ້າງ. ການກໍ່ສ້າງ ປະກອບມີ ວຽກປັບປຸງ ແລະ ຂະຫຍາຍໜ້າທາງ ຈາກ 2 ຊ່ອງທາງຈາລະຈອນ ເປັນ 4 ຊ່ອງທາງຈາລະຈອນ (4 x 3,50 ແມັດ) ມີດອນທາງກາງກວ້າງ 2 ແມັດ. ມີຊ່ອງທາງຈາລະຈອນສຳລັບລົດຈັກທັງສອງເບື້ອງ

ເບື້ອງລະ 2 ແມັດ, ມີທາງຄົນຍ່າງທັງສອງເບື້ອງຂອງເສັ້ນທາງ ເບື້ອງລະ 1,50 ແມັດ, ຄວາມກວ້າງຂອງໜ້າທາງທັງໝົດ ແມ່ນ 23 ແມັດ.

ເພື່ອເຮັດໃຫ້ໂຄງການດັ່ງກ່າວໄດ້ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ສໍາເລັດຕາມແຜນການທີ່ວາງໄວ້, ຫ້ອງການ ກະຊວງ ໂຍທາທິການ ແລະ ຂົນສົ່ງ ຈຶ່ງຂໍຄວາມຮ່ວມມືມາຍັງບັນດາທ່ານ ຈົ່ງໄດ້ເອົາໃຈໃສ່ປະຕິບັດດັ່ງລຸ່ມນີ້:

1. ນັບຕັ້ງແຕ່ວັນທີ 15 ເດືອນພະຈິກ ປີ 2021 ເປັນຕົ້ນໄປ ຫ້າມປຸກສ້າງ ຫຼື ຕໍ່ເຕີມສິ່ງປຸກສ້າງເດີມທີ່ມີຢູ່ແລ້ວ ເປັນຕົ້ນແມ່ນ, ຮົ້ວ, ເທີບ, ຮ້ານ, ເຮືອນ, ເຮືອນຈອດລົດ, ປູກພືດ, ຕົ້ນໄມ້ທຸກຊະນິດ ແລະ ສິ່ງກີດຂວາງໃດໆໃສ່ໃນຂອບເຂດຂອງທາງ ເຊິ່ງນັບຈາກໃຈກາງຂອງທາງອອກໄປເບື້ອງລະ 15 ແມັດ. ຖ້າຫາກມີສິ່ງປຸກສ້າງ ຫຼື ສິ່ງກີດຂວາງທີ່ຖືກຕິດຕັ້ງຢູ່ຂອບເຂດຂອງເສັ້ນທາງດັ່ງກ່າວຫລັງຈາກວັນທີຂອງແຈ້ງການສະບັບນີ້, ເຈົ້າຂອງໂຄງການ ຈະບໍ່ຊົດເຊີຍ ຫຼື ທົດແທນຄ່າເສຍຫາຍ.

2. ທີມງານຂອງໂຄງການ ພ້ອມດ້ວຍຄະນະກໍາມະການໄກ່ເກ່ຍສິ່ງກີດຂວາງຕາມແລວທາງ ຈະກວດກາ ຄືນລາຍລະອຽດບັນຊີລາຍຊື່ ແລະ ຂໍ້ມູນຜູ້ຖືກຜົນກະທົບຈາກການຂະຫຍາຍເສັ້ນທາງດັ່ງກ່າວ ໂດຍອີງໃສ່ຂໍ້ມູນ ແລະ ບົດລາຍງານ ການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ບໍລິສັດທີ່ປຶກສາ ໄດ້ລົງສໍາຫຼວດເກັບກໍາຂໍ້ມູນ ເພື່ອເປັນບ່ອນອີງໃນການຄິດໄລ່ຊົດເຊີຍທົດແທນ ແລະ ເວນຄືນໃຫ້ແກ່ຄອບຄົວທີ່ໄດ້ຜົນກະທົບຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ພະນັກງານ ທະຫານ, ຕໍາຫຼວດ ຕະຫຼອດຮອດ ພໍ່ແມ່ປະຊາຊົນຊາວນະຄອນຫຼວງວຽງຈັນ ແລະ ຊາວຕ່າງດ້າວ ຜູ້ທີ່ຢູ່ອາໄສຢູ່ລຽບຕາມທາງຫຼວງແຫ່ງຊາດເລກທີ 13 ເໜືອ ແຕ່ສາມແຍກສີໄຄ ເມືອງສີໂຄດຕະບອງ ຫາ ສີ່ແຍກສີເກີດ ເມືອງນາຊາຍທອງ ເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືດ້ວຍ. ໗

ຮອງ ແທນ ຫົວໜ້າຫ້ອງການ

ຈັນທະພອນ ສຸລິໂຍ